# ເທ່ເຊ່

2016

ບົດສະເໜີ ປະຈໍາປີ 2016

ຄວາມກ້າຫານໃນການເມດຕາ

ຕະຫຼອດປີ 2015 ຢູ່ໝູ່ບ້ານເທ່ເຊ່ ພວກເຮົາໄດ້ຊອກຫາຫົນທາງທີ່ຈະສ້າງຄວາມປອງດອງເປັນໜຶ່ງດຽວ; ເຊິ່ງນີ້ແມ່ນເລື່ອງຮີບດ່ວນທີ່ຕ້ອງປະຕິບັດໃນເວລານີ້. ໃນໂລກປະຈຸບັນ, ຮູບແບບຂອງຄວາມລຳບາກ ບໍ່ວ່າຈະເປັນເລື່ອງການອົບພະຍົກຍ້າຍຖິ່ນຖານ, ລະບົບນິເວດວິທະຍາ, ແລະ ດ້ານສັງຄົມ ລ້ວນແລ້ວແຕ່ເປັນສິ່ງທີ່ທ້າທາຍຫຼາຍສຳລັບມະນຸດເຮົາຜູ້ທີ່ມີຄວາມເຊື່ອທີ່ແຕກຕ່າງກັນ ຫຼື ສຳລັບຜູ້ທີ່ບໍ່ມີຄວາມເຊື່ອ (ຜູ້ບໍ່ມີສາດສະໜາ)ເຊັ່ນດຽວກັນ.

ເສິກສົງຄາມ ແມ່ນຄວາມຫາຍຍານະ ພາຍໃຕ້ອຸດົມການທີ່ໂຫດຫ້ຽມ ບໍ່ມີຄວາມເມດຕາ. ໃນຂະນະທີ່ຍັງຫຼົງເຫຼືອຄວາມເປັນມະນຸດຢູ່, ພວກເຮົາຄວນສືບຕໍ່ "ການສະແຫວງບຸນແຫ່ງຄວາມໄວ້ວາງໃຈ" ເຊິ່ງມັນເປັນອີກຫົນທາງໜຶ່ງທີ່ຈະສາມາດລຶບລ້າງແນວຄິດຢ້ານກົວທີ່ຖືກສ້າງຂຶ້ນໂດຍຄວາມຮູ້ສຶກທີ່ບໍ່ປອດໄພຕໍ່ກັບສັງຄົມນີ້. ເຊິ່ງມັນເປັນສິ່ງສາຄັນແລະຮີບດ່ວນ ທີ່ວ່າບັນດາຜູ້ທີ່ຊອກສະແຫວງຫາ ຫຼື ຜູ້ທີ່ໄດ້ຢູ່ໃນໂລກໂລກາພິວັດຂອງຄວາມເປັນຈິດໜຶ່ງໃຈດຽວແລ້ວ ຈະຊ່ວຍເຫຼືອເຊິ່ງກັນແລະກັນ.

ເມື່ອມີລົມພະຍຸ, ເຮືອນທີ່ຖືກສ້າງຂຶ້ນເທິງຫີນສີລາຈະບໍ່ພັງທະລາຍ (ມັດເທວ 7:24-25). ພວກເຮົາຕ້ອງການທີ່ຈະສ້າງຊີວິດຂອງເຮົາເທິງພຣະວາຈາຂອງພຣະເຢຊູເຈົ້າ, ເພື່ອວ່າຫີນສີລາຂອງເຮົາຈະປະກອບມີ 3 ເສົາຫຼັກພື້ນຖານທີ່ເປັນຄວາມຈິງແຫ່ງພຣະວໍລະສານ ທີ່ທຸກຄົນສາມາດເຂົ້າເຖິງໄດ້ ເຊັ່ນ: ຄວາມຊື່ນຊົມຍິນດີ - ຄວາມລຽບງ່າຍ - ຄວາມເມດຕາກາລຸນາ. ບຣາເດີ້ ໂຣເຈີ້ ໄດ້ຕັ້ງສິ່ງເຫຼົ່ານີ້ໃຫ້ເປັນໝາກຫົວໃຈຂອງການໃຊ້ຊີວິດໃນໝູ່ບ້ານເທ່ເຊ່. ມັນຍັງເປັນສິ່ງທີ່ເຮັດໃຫ້ເພິ່ນກ້າວເດີນໄປທາງໜ້າໄດ້ເຖິງແມ່ນຈະພົບກັບອຸປະສັກທີ່ຫຍຸ້ງຍາກກໍ່ຕາມ. ບຣາເດີ້ໂຣເຈີ້ ຍັງໄດ້ຫຼອມລວມສາມສິ່ງນີ້ ເພື່ອວັນໜຶ່ງຈະໄດ້ກັບໄປສູ່ສິ່ງນີ້.

ສາມຄຳສັບ (3 ເສົາຫຼັກ) ນີ້ຈະເປັນສິ່ງນຳທາງເຮົາໃນການເດີນທາງໃນອີກສາມປີຕໍ່ໜ້າ. ໃນປີ 2016, ພວກເຮົາຈະເລີ່ມດ້ວຍຄຳວ່າ "ເມດຕາກາລຸນາ" ເຊິ່ງພາຍໃຕ້ພຣະຈິດອັນດຽວກັນ ພຣະສັນຕະປາປາ ຟານຊິສໂກໄດ້ປະກາດປີນີ້ໃຫ້ເປັນປີແຫ່ງຄວາມເມດຕາກາລຸນາ.

ພຣະວໍລະສານໄດ້ຮຽກເອີ້ນພວກເຮົາໃຫ້ເປັນພະຍານແຫ່ງຄວາມຮັກຂອງພຣະອົງເຈົ້າ. ຕໍ່ໄປນີ້ແມ່ນ 5 ບົດສະເໜີທີ່ຈະເຕືອນພວກເຮົາກ່ຽວກັບ ຄວາມກ້າຫານແຫ່ງການເມດຕາ.

ບຣາເດີ້ ອະລອຍ

*ບົດສະເໜີ ທີ່ໜຶ່ງ*

## ມອບຄວາມໄວ້ວາງໃຈຂອງພວກເຮົາແກ່ພຣະອົງເຈົ້າພຣະເຈົ້າແຫ່ງຄວາມເມດຕາກາລຸນາ

*ພຣະອົງຊົງເປັນພຣະເຈົ້າທີ່ພ້ອມຈະໃຫ້ອະໄພ, ມີພຣະໄທເມດຕາແລະກາລຸນາ ຊົງມີຄວາມອົດທົນ, ບໍ່ກິ້ວໂກດ ແລະ ອຸດົມໄປດ້ວຍຄວາມຮັກ. (Nehemiah 9:17)*

*ຈົ່ງມີໃຈເມດຕາຄືດັ່ງພຣະບິດາເຈົ້າຜູ້ຊົງມີພຣະໄທເມດຕາກາລຸນາ (ລູກາ 6:36)*

ອີງຕາມພຣະຄຳພີ ພຣະອົງເຈົ້າແມ່ນພຣະເຈົ້າຜູ້ມີ ຄວາມເຫັນອົກເຫັນໃຈ, ໃຈເມດຕາກາລຸນາ. ຈາກອຸປະມາການປຽບທຽບໃນເລື່ອງລູກລ້າງຜານ (ລູກາ 15), ພຣະເຢຊູຊົງສະແດງໃຫ້ເຮົາຮູ້ວ່າ ຄວາມຮັກຂອງພຣະເຈົ້າບໍ່ໄດ້ຂຶ້ນກັບຄວາມດີທີ່ເຮົາເຮັດ; ແຕ່ພຣະອົງປະທານໃຫ້ໂດຍບໍ່ມີເງື່ອນໄຂ. ພຣະບິດາຊົງຮັກລູກຊາຍກົກຜູ້ທີ່ມີຄວາມສັດທາຕະຫຼອດຊີວິດຂອງລາວ ແລະ ພຣະອົງກໍຍັງຍື່ນມືໄປຊ່ວຍລູກຊາຍຫຼ້າຜູ້ທີ່ສູນເສຍໄປ ໃນຂະນະທີ່ລູກຊາຍຜູ້ນັ້ນໄດ້ໜີໄປໄກແສນໄກແລ້ວ.

ພຣະເຈົ້າຊົງສ້າງມະນຸດຕາມຮູບແບບຂອງພຣະອົງ. ດັ່ງນັ້ນ “ພວກເຮົາເປັນມະນຸດຕາມພຣະກາຍະພາບຂອງພຣະອົງເຈົ້າໂດຍໄດ້ຮັບຄຸນຄວາມດີ, ໃຈເມດຕາກາລຸນາ ເພື່ອຈະໄດ້ເຂົ້າມາໃກ້ຊິດນຳພຣະເຢຊູເຈົ້າ” (ນັກບຸນ Basil of Caesarea ໃນສັດຕະວັດທີ 4)

ຄວາມຮັກຂອງພຣະເຈົ້າບໍ່ພຽງແຕ່ມີໃນຊົ່ວຂະນະເທົ່ານັ້ນ ແຕ່ພຣະເຈົ້າປະທານໃຫ້ເຮົາຕະຫຼອດເວລາ. ດ້ວຍຄວາມເຫັນອົກເຫັນໃຈຂອງພວກເຮົາ, ພວກເຮົາສາມາດເປັນກະຈົກເງົາແຫ່ງຄວາມຮັກນີ້ໄດ້. ໃນຄວາມເປັນກຣິສຕັງ, ພວກເຮົາສາມາດແບ່ງປັນຄວາມຮັກກັບຜູ້ທີ່ເຊື່ອຖືຕ່າງໆໃນທຸກໆສາສນາ ເພື່ອວ່າເຮົາຈະໄດ້ຍຶດຖືຄວາມເມດຕາເປັນຈຸດໃຈກາງຂອງຊີວິດເຮົາ.

- ໃຫ້ພວກເຮົາຕ້ອນຮັບຄວາມຮັກຂອງພຣະເຈົ້າ. ພຣະເຈົ້າບໍ່ເຄີຍປິດຫົວໃຈຂອງພຣະອົງຕໍ່ເຮົາ ແລະ ຄວາມດີຂອງພຣະອົງເປັນສິ່ງທີ່ປົກປ້ອງເຮົາຕະຫຼອດເວລາ, ແມ້ແຕ່ໃນຍາມທີ່ຄວາມຜິດທີ່ເຮົາສ້າງຂຶ້ນເຮັດໃຫ້ເຮົາສະດຸດລົ້ມກໍຕາມ. ເມື່ອພວກເຮົາໄດ້ໜີອອກໄກຈາກພຣະອົງ ພວກເຮົາກໍບໍ່ຄວນຢ້ານທີ່ຈະຫັນໜ້າກັບມາແລະມອບຄວາມໄວ້ໃຈໃຫ້ພຣະອົງຄືນໃໝ່; ພຣະເຈົ້າຈະມາພົບເຮົາຕະຫຼອດເວລາ.
- ພວກເຮົາບໍ່ຄວນເບິ່ງການພາວະນາເປັນເລື່ອງທີ່ຫຍຸ້ງຍາກລຳບາກ, ແຕ່ຈົ່ງຕ້ອນຮັບເອົາການພາວະນາ ໃຫ້ເປັນຊ່ວງເວລາທີ່ເຮົາຢຸດນິ້ງແລະຫາຍໃຈ, ເມື່ອພຣະຈິດເຈົ້າໄດ້ເຂົ້າມາປະທັບໃນເຮົາດ້ວຍຄວາມຮັກແລ້ວ ມັນຈະເຮັດໃຫ້ເຮົາສາມາດດຳເນີນຊີວິດດ້ວຍຄວາມເມດຕາກາລຸນາ.

*ບົດສະເໜີ ທີ່ສອງ*

## ໃຫ້ອະໄພ ອີກຄັ້ງໜຶ່ງ ອີກຫົນໜຶ່ງ

*ຈົ່ງສວມໃຈເມດຕາ ໃຈປານີ ຖ່ອມຕົນ ໃຈສຸພາບ ແລະໃຈອົດທົນ. ຈົ່ງຜ່ອນໜັກໃຫ້ເປັນເບົາຕໍ່ກັນແລະກັນ ແລະຖ້າຜູ້ໃດມີເລື່ອງລາວຕໍ່ກັນກໍຈົ່ງຍົກໂທດໃຫ້ກັນແລະກັນ ພຣະເຈົ້າຊົງຍົກໂທດໃຫ້ທານແນວໃດ ທ່ານກໍຈົ່ງຍົກໂທດຢ່າງນັ້ນ. (ໂກໂລຊາ 3:12-13)*

*ຂະນະນັ້ນ ເປໂຕມາທູນຖາມພຣະອົງວ່າ "ພຣະອົງເຈົ້າ, ຫາກພີ່ນ້ອງຂອງຂ້າພະເຈົ້າກະທຳຜິດຕໍ່ຂ້າພະເຈົ້າຕະຫຼອດເວລາ ຂ້າພະເຈົ້າຄວນຈະຍົກໂທດໃຫ້ພວກເຂົາຈັກຄັ້ງ ຮອດເຈັດຄັ້ງບໍ". ພຣະເຢຊູເຈົ້າຊົງກ່າວຕອບວ່າ "ເຮົາບໍ່ໄດ້ວ່າພຽງເຈັດຄັ້ງເທົ່ານັ້ນ ແຕ່ເຈັດຄັ້ງຄູນດ້ວຍເຈັດສິບ" (ມັດທາຍ 18:21-22)*

ພຣະເຈົ້າບໍ່ເຄີຍປະຕິເສດທີ່ຈະໃຫ້ອະໄພພວກເຮົາ ບໍ່ວ່າຈະເປັນສະຖານະການໃດ ແມ້ແຕ່ເວລາທີ່ພຣະອົງຖືກຄຶງກາງເຂນ ພຣະເຢຊູເຈົ້າຍັງຊົງໃຫ້ອະໄພເຮົາ; ພຣະອົງປະຕິເສດທີ່ຈະຕັດສິນລົງໂທດພວກເຮົາ.

ເມື່ອພວກເຮົາຮູ້ວ່າ ພວກເຮົາໄດ້ຮັບການໃຫ້ອະໄພ ໃນທາງກັບກັນພວກເຮົາກໍຄວນອະໄພໃຫ້ຄົນອື່ນ - ນີ້ແມ່ນທີ່ສຸດຂອງຄວາມຊື່ນຊົມຍິນດີທີ່ເຮົາໄດ້ປົດປ່ອຍອອກໄປ. ມັນແມ່ນຄວາມສັນຕິສຸກໃນໃຈຂອງເຮົາ ທີ່ພຣະເຢຊູເຈົ້າຢາກບອກໃຫ້ເຮົາຮູ້.

ພຣະກຣິສຕະຈັກໄດ້ຮອບຮອມກຣິສຕັງຜູ້ທີ່ຮັກໃນອົງພຣະເຢຊູເຈົ້າ. ມັນເປັນການເອີ້ນເຊີນໃຫ້ພວກເຮົາປ່ຽນແປງໂດຍຍຶດເອົາຄວາມເມດຕາ. "ເມື່ອພຣະກຣິສຕະຈັກຮັບຟັງ, ປິ່ນປົວຮັກສາ ແລະ ໃຫ້ອະໄພ, ມັນຈະກັບກາຍມາເປັນແສງສະຫວ່າງທີ່ຮຸ່ງແຈ້ງ - ມີຄວາມເປັນໜຶ່ງດຽວໃນຄວາມຮັກ, ໃນຄວາມເຫັນອົກເຫັນໃຈ, ໃນຄວາມໂອບເອື້ອອາລີ, ມັນກໍຈະສະແດງໃຫ້ເຫັນຢ່າງຊັດເຈນເຖິງການກັບເປັນຄືນມາຂອງອົງພຣະເຢຊູເຈົ້າ. ບໍ່ເຄີຍຫ່າງເຫີນ, ປາສະຈາກຄວາມຮຸນແຮງ ເຊິ່ງມັນຈະນຳໄປຊຶ່ງຄວາມໄວ້ເນື້ອເຊື່ອໃຈດ້ວຍຄວາມຖ່ອມຕົນໃນຄວາມເຊື່ອ ໃຫ້ເລິກລົງໄປສູ່ຈິດໃຈຂອງມະນຸດເຮົາ" (ບຣາເດີ້ ໂຣເຈີ້)

ການໃຫ້ອະໄພຂອງພຣະເອົງເຈົ້າ ບໍ່ສາມາດນຳໃຊ້ເພື່ອໄປຕັດສິນ ຄວາມຊົ່ວຫຼືຄວາມບໍ່ຍຸດຕິທຳໄດ້. ກົງກັນຂ້າມ, ມັນຈະຊ່ວຍໃຫ້ເຮົາເປັນອິດສະຫຼະທີ່ສາມາດຈົດຈຳຄວາມຜິດຂອງຕົນເອງໄດ້, ເຊິ່ງລວມໄປເຖິງຄວາມຜິດ ແລະ ຄວາມບໍ່ຍຸດຕິທຳ ທີ່ເກີດຂຶ້ນອ້ອມຂ້າງເຮົາ ແລະ ເກີດຂຶ້ນໃນໂລກນີ້. ມັນຂຶ້ນຢູ່ກັບເຮົາເອງທີ່ຈະຕັດສິນວ່າ ສິ່ງໃດເປັນສິ່ງທີ່ຖືກຕ້ອງ.

- ໃຫ້ພວກເຮົາພະຍາຍາມໃຫ້ອະໄພ - ບໍ່ວ່າຈະເປັນເຈັດສິບຄູນເຈັດເທື່ອ. ຖ້າບາດແຜໃນໃຈເຮົາຫາກໃຫຍ່ຫຼາຍ, ພວກເຮົາສາມາດເລີ່ມຕົ້ນເທື່ອລະນ້ອຍ. ກ່ອນຈະສວາຍເກີນໄປ, ຄວາມປາດຖະໜາທີ່ຈະໃຫ້ອະໄພອາດຈະຖືກຄອບງຳເປັນເວລາດົນນານ ໂດຍຄວາມທໍລະມານທີ່ຜິດໆ.
- ພວກເຮົາສາມາດສະແດງໃຫ້ເຫັນວ່າ ພຣະກຣິສຕະຈັກແມ່ນຊຸມຊົນແຫ່ງຄວາມເມດຕາ ໂດຍການເປີດໃຈໃຫ້ກວ້າງປາສະຈາກການແບ່ງແຍກ ຕໍ່ຜູ້ຄົນທີ່ຢູ່ອ້ອມຂ້າງເຮົາ, ໂດຍການສະແດງນ້ຳໃຈໂອບເອື້ອອາລີ, ໂດຍປາສະຈາກການຕັດສິນຜູ້ອື່ນ, ໂດຍການປົກປ້ອງຜູ້ດ້ອຍໂອກາດ, ໂດຍປອບປະໂລມແລະມີຈິດໃຈທີ່ກວ້າງຂວາງ.

*ບົດສະເໜີ ທີ່ສາມ*

## ຫຍັບເຂົ້າໃກ້ກັບສະຖານະການທີ່ທຸກໂສກ, ຜູ້ດຽວຫຼືຮ່ວມກັບຜູ້ອື່ນ

*ຖ້າເຈົ້າຫຸ້ມເທຊີວິດຂອງເຈົ້າໃຫ້ແກ່ຄົນຫິວໂຫຍ ແລະ ໃຫ້ຜູ້ທີ່ທຸກໂສກໄດ້ອີ່ມໃຈແລ້ວ ຄວາມສະຫວ່າງຂອງເຈົ້າຈະເກີດຂຶ້ນທ່າມກາງຄວາມມືດ ແລະ ຄວາມມືດຂອງເຈົ້າຈະກັບກາຍມາເປັນກາງເວັນ. (ອິຊາຢາ 58:10)*

*ຖ້າຜູ້ໃດມີຊັບສົມບັດໃນໂລກນີ້ ແລະເຫັນພີ່ນ້ອງຂອງຕົນຂັດສົນ ແລະຍັງໃຈຈືດໃຈດຳບໍ່ສົງເຄາະເຂົາ ຄວາມຮັກຂອງພຣະເຈົ້າຈະດຳລົງຢູ່ໃນຄົນຜູ້ນັ້ນໄດ້ແນວໃດ? (1 ຢວງ 3:17)*

ສັນຍະລັກຂອງຄວາມເມດຕາກາລຸນາ ໄດ້ບົ່ງບອກວ່າອົງພຣະກຣິສໂຕຊົງແນມເບິ່ງພວກເຮົາດ້ວຍຄວາມຮັກ ແລະ ບອກພວກເຮົາກ່ຽວກັບເລື່ອງລາວຂອງຊາວຊະມາລີຜູ້ໃຈດີ (ລູກາ 10): ມີຊາຍຜູ້ໜຶ່ງກຳລັງຈະຕາຍນອນຢູ່ຂ້າງຖະໜົນ; ມີພຣະສົງແລະຊາວເລວີຍ່າງກາຍມາ ກໍໄດ້ຍ່າງກາຍໄປຕາມທາງຂອງເຂົາ; ຄົນຕ່າງຖິ່ນຜູ້ທີ່ມາຈາກໝູ່ບ້ານຊາມາຣີອາ ໄດ້ເຂົ້າມາຫາຊາຍບາດເຈັບຄົນນັ້ນ, ປົວະບັດເຂົາ ແລະ ພາເຂົາໄປຮັກສາ.

ຄວາມເມດຕາກາລຸນາໄດ້ເປີດດວງໃຈເຮົາໃຫ້ເຫັນເຖິງຄວາມລຳບາກຂອງຜູ້ອື່ນ, ໃຫ້ເຫັນທຸກຮູບແບບຂອງຄວາມທຸກຍາກ ຕະຫຼອດຮອດທຸກຮູບແບບຂອງຄວາມທໍລະມານ: ເດັກຄົນໜຶ່ງໄດ້ຜ່ານຜ່າຊ່ວງເວລາທີ່ຍາກລຳບາກ, ຄອບຄົວພົບກັບຄວາມຂັດສົນ, ຄົນບ້ານແຕກສະແຫຼກຂາດ, ໄວໜຸ່ມເຫັນຊີວິດຂອງຕົນບໍ່ມີຄວາມໝາຍ, ຜູ້ເຖົ້າທີ່ຢູ່ໂດດດ່ຽວ ຕະຫຼອດຮອດຄົນທີ່ບໍ່ສາມາດເຂົ້າເຖິງການສຶກສາ, ສິນລະປະ ແລະວັດທະນະທຳ.

ໃນຄວາມທຸກຈົນ, ອົງພຣະເຢຊູເອງ ອົງຜູ້ຊົງຫວັງຕໍ່ຄວາມເຫັນອົກເຫັນໃຈຂອງພວກເຮົາ ແລະ ອົງທີ່ຊົງກ່າວກັບເຮົາວ່າ: “ເຮົາຫິວໂຫຍ, ແລະເຈົ້າເອົາໃຫ້ເຮົາກິນ” (ມັດເທວ 25). “ຍ້ອນຄວາມເຫັນອົກເຫັນໃຈ, ພຣະເຢຊູເຈົ້າຈຶ່ງໄດ້ຍອມທົນທໍລະມານເພື່ອມະນຸດທັງປວງ. ຍ້ອນຄວາມເມດຕາຂອງພຣະອົງ ໃນຂໍ້ເລິກລັບແຫ່ງຄວາມເຊື່ອ ພຣະອົງຊົງຍອມທໍລະມານເພື່ອພວກເຮົາທຸກໆຄົນຈົນເຖິງວັນສິ້ນພິພົບ” (ນັກບຸນ Maximus the Confessor, ສັດຕະວັດທີ 7).

ເມື່ອພວກເຮົາມີບາດແຜຈາກຄວາມຍາກລຳບາກແລ້ວ, ພຣະເຢຊູເຈົ້າຈະຊົງດູແລເຮົາ. ຄວາມຮັກຂອງພຣະອົງຈະຊົງຖືກເປີດເຜີຍເອງຜ່ານບຸກຄົນໃດໜຶ່ງຜູ້ທີ່ເຂົ້າມາໃນຊີວິດເຮົາ, ບາງຄັ້ງກໍຜ່ານຄົນແປກໜ້າທີ່ເຂົ້າມາໃນຊີວິດເຮົາ ຄືດັ່ງໃນຄຳອຸປະມາເລື່ອງຊາວຊາມາຣີຜູ້ໃຈດີ.

- ໃຫ້ພວກເຮົາກ້າທີ່ຈະຍັບເຂົ້າໃກ້ ເຫດການທີ່ມີຄວາມລຳບາກທີ່ຢູ່ອ້ອມຂ້າງເຮົາຫຼືຂ້າງຖະໜົນ ບໍ່ວ່າຈະດ້ວຍຕົວຄົນດຽວຫຼືກັບຄົນອື່ນ. ຄວາມເມດຕາບໍ່ແມ່ນອາລົມອ່ອນໄຫວ ແຕ່ມັນເປັນຄວາມຮຽກຮ້ອງຕ້ອງການ; ຮູ້ວ່າມັນບໍ່ຈຳກັດ. ກົດໝາຍໄດ້ບົ່ງບອກເຖິງພາລະໜ້າທີ່ທຸກຢ່າງຢ່າງຈະແຈ້ງແລະມີຂອບເຂດ, ເຊິ່ງຄວາມເມດຕາບໍ່ເຄີຍບົ່ງໄວ້ວ່າ “ຂ່ອຍຊ່ວຍນີ້ພຽງພໍແລ້ວ, ຂ້ອຍເຮັດໜ້າທີ່ຂ້ອຍສຳເລັດແລ້ວ”

*ບົດສະເໜີ ທີ່ສີ່*

## ຫຍັບເຂົ້າໃກ້ກັບສະຖານະການທີ່ທຸກໂສກ, ຜູ້ດຽວຫຼືຮ່ວມກັບຜູ້ອື່ນ

ເຮົາແມ່ນພຣະອົງເຈົ້າ, ອົງທີ່ຊົງກະທຳດ້ວຍໃຈເຫດຕາ, ຍຸດຕິທຳ ແລະ ຖືກຕ້ອງບົນໂລກນີ້ (Jeremiah 9:23)

ນີ້ແມ່ນສິ່ງທີ່ພຣະອົງເຈົ້າຊົງຕ້ອງການຈາກເຈົ້າ: ໃຫ້ກະທຳທຸກຢ່າງດ້ວຍຄວາມຍຸດຕິທຳ, ຮັກຄວາມເມດຕາ ແລະ ຍ່າງດ້ວຍຄວາມຖ່ອມຕົນກັບພຣະເຈົ້າຂອງເຈົ້າ (ໄມກາ 6:8)

ໃນດວງພຣະໄທຂອງພຣະອົງເຈົ້າ, ມະນຸດທັງຫຼາຍຖືກສ້າງຂຶ້ນເປັນຄອບຄົວໜຶ່ງຄອບຄົວດຽວ. ດັ່ງນັ້ນ, ຄວາມເມດຕາໄດ້ຂະຫຍາຍອອກໄປເປັນສັດຈະທຳ.

ເພື່ອໃຫ້ຄວາມເປັນໜຶ່ງດຽວກັນຂອງໂລກນີ້ໃຫ້ປະກົດຜົນເປັນຈິງ, ມັນມີຄວາມຈາເປັນທີ່ຈະຕ້ອງເສີມສ້າງໃຫ້ນານາຊາດຕັ້ງກົດລະບຽບຕາມລະບອບປະຊາທິປະໄຕ ເພື່ອຮັບປະກັນໃຫ້ມີຄວາມຍຸດຕິທຳກວ່າເກົ່າ ແລະ ຮັກສາສັນຕິພາບໄວ້.

ໜີ້ສິນຂອງປະເທດທີ່ທຸກຍາກສ່ວນຫຼາຍແມ່ນຕົກເປັນຂອງບັນດາປະເທດມະຫາອຳນາດ ແລະ ບັນດາຜູ້ທີ່ໃຊ້ສອຍຊັບພະຍາກອນຂອງພວກເຂົາ. ເຖິງແມ່ນວ່າມັນຈະເບິ່ງຄືເປັນໄປບໍ່ໄດ້ສຳລັບພວກເຮົາທີ່ຈະປ່ຽນສິ່ງຕ່າງໆເຫຼົ່ານີ້, ພວກເຮົາກໍຄວນຈື່ຈຳໄວ້ວ່າ ການຍົກໜີ້ສິນເປັນອີກທົນທາງໜຶ່ງທີ່ຈະຟື້ນຟູຄວາມຍຸດຕິທຳ. ໃນຮູບແບບທີ່ແຕກຕ່າງຈາກຍຸກປະຈຸບັນ, ພຣະຄຳພີໄດ້ຢ້ຳເຕືອນເຮົາວ່າ: “ຖ້າພີ່ນ້ອງຂອງພວກເຈົ້າທຸກຈົນລົງ ແລະບໍ່ສາມາດລ້ຽງດູຕົວເອງໄດ້, ເຈົ້າຈະຕ້ອງຊ່ວຍເຫຼືອພວກເຂົາ ຄືດັ່ງເຂົາເປັນຄົນແປກໜ້າ ເພື່ອວ່າພວກເຂົາຈະອາໄສຢູ່ນຳເຈົ້າ” (Leviticus 25:35).

ໃນຍຸກປະຈຸບັນນີ້ ຍັງມີຄົນຈຳນວນຫຼາຍບໍ່ວ່າຈະເປັນ ຜູ້ຊາຍ, ຜູ້ຍິງ ຫຼືເດັກນ້ອຍ ແມ່ນໄດ້ຖືກບັງຄັບໃຫ້ອອກຈາກບ້ານເກີດເມືອງນອນຂອງຕົນ. ຊະຕາກຳຂອງພວກເຂົາໄດ້ສ້າງແຮງຈູງໃຈທີ່ເຂັ້ມແຂງກວ່າອຸປະສັກທີ່ເຂົາຕ້ອງປະເຊີນ. ບັນດາປະເທດທີ່ຮັ່ງມີຄວນຮູ້ຕົວວ່າພວກເຂົາເອງກໍມີສ່ວນຮ່ວມຮັບຜິດຊອບນຳບາດແຜທີ່ເກີດຂຶ້ນໃນສະໄໝກ່ອນທີ່ເຮັດໃຫ້ມີການອົບພະຍົກດັ່ງກ່າວ ເປັນຕົ້ນແມ່ນຈາກ ອາຟຣິກກາ ແລະ ຕາເວັນອອກກາງ.

- ມັນເປັນສິ່ງທີ່ສຳຄັນຫຼາຍທີ່ພວກເຮົາຄວນຮັບຮູ້ວ່າ ເຖິງແມ່ນວ່າການຫຼັ່ງໄຫຼເຂົ້າປະເທດໃດໜຶ່ງຂອງບັນດາຜູ້ລີ້ໄພ ຫຼືຜູ້ອົບພະຍົກຈະສ້າງບັນຫາທີ່ຫຍຸ້ງຍາກກໍຕາມ, ແຕ່ນີ້ກໍອາດຈະເປັນໂອກາດທີ່ດີ. ຜູ້ທີ່ໄດ້ເຄາະປະຕູບັນດາປະເທດທີ່ຮັ່ງມີກວ່າປະເທດຕົນເອງ ໄດ້ເປັນແຮງບັນດານໃຈໃຫ້ປະເທດເຫຼົ່ານີ້ດຳລົງຊີວິດໃນຄວາມເປັນໜຶ່ງດຽວກັບພວກເຂົາ. ພວກເຂົາບໍ່ໄດ້ຊ່ວຍປະເທດນີ້ເລີຍບໍ? ການແກ້ໄຂບັນຫາຮ່ວມກັບສິ່ງທ້າທາຍຕ່າງໆໄດ້ເຮັດໃຫ້ເຫັນເຖິງຄື້ນຂອງພວກລີ້ໄພ, ບັນດາປະເທດທີ່ຢູ່ສະຫະພາຍເອີລົບສາມາດຄົ້ນພົບຄວາມຫຼາກຫຼາຍທີ່ເຄີຍຊຸດໂຊມໄປຄືນມາໄດ້.
- ເຮົາຄວນທີ່ຈະກ້າວເດີນໄປຂ້າງໜ້າໃຫ້ໄກກວ່າຄວາມຢ້ານກົວທີ່ເຮົາມີ ແລະ ວັດທະນະທຳທີ່ແຕກຕ່າງ. ຄວາມຢ້ານກົວດັ່ງກ່າວເປັນທີ່ເຂົ້າໃຈ - ຜູ້ທີ່ຊ່ວຍຕ້ອນຮັບຜູ້ລີ້ໄພ ໂດຍທົ່ວໄປແລ້ວ ບາງຄັ້ງກໍອິດເມື່ອຍ. ຄວາມຢ້ານກົວຈະບໍ່ລຸດລົງ, ເຖິງແມ່ນວ່າເຮົາຈະຊ້ອນເຊື່ອງຕົນເອງຢູ່ຫຼັງກຳແພງ ແຕ່ເຮົາຕ້ອງກ້າວໄປຂ້າງໜ້າປະເຊີນກັບຄົນທີ່ເຮົາບໍ່ຮູ້ຈັກກໍຕາມ. ແທນທີ່ຈະເບິ່ງຄົນແປກໜ້າວ່າເປັນອຸປະສັກຕໍ່ການດຳເນີນຊີວິດຫຼືຕໍ່ວັດທະນະທຳຂອງຕົນ, ເປັນຫຍັງຄືບໍ່ຕ້ອນຮັບພວກເຂົາຄືດັ່ງເປັນສະມາຊິກຄົນໜຶ່ງ ແລະ ຄືດັ່ງເປັນມະນຸດຮ່ວມຊາດບໍ?

*ບົດສະເໜີ ທີ່ຫ້າ*

**ຄວາມເມດຕາກາລຸນາຕໍ່ສິ່ງທີ່ພຣະເຈົ້າຊົງສ້າງທັງໝົດ**

*ຈົ່ງເຮັດວຽກງານຂອງເຈົ້າໃນຫົກມື້ ແຕ່ໃນມື້ທີເຈັດນັ້ນຈົ່ງຢຸດເຮັດວຽກ ເພື່ອງົວແລະລາຂອງເຈົ້າຈະໄດ້ພັກຜ່ອນ. (ອົບພະຍົກ 23:12)*

*ຈົ່ງຫວ່ານພືດແລະເກັບກ່ຽວຜົນໃນນາຂອງເຈົ້າຕະຫຼອດຫົກປີ, ແຕ່ປີທີເຈັດ ແມ່ນປ່ອຍໃຫ້ນາວ່າງແລະບໍ່ຕ້ອງໃຊ້ງານມັນ (ອົບພະຍົກ 23:10-11)*

ໃນພາສາຍຸກປະຈຸບັນ, ພຣະຄໍາພີໄດ້ເອີ້ນເຊີນເຮົາໃຫ້ເປັນຫ່ວງເປັນໄຍຕໍ່ກັບສິ່ງແວດລ້ອມ, ເຄົາລົບບັນດາສິ່ງຕ່າງໆໃນທໍາມະຊາດທີ່ຖືກສ້າງຂຶ້ນ, ບໍ່ຄວນລົງມືກະທໍາສິ່ງໃດທີ່ບໍ່ໄດ້ຄິດລ່ວງໜ້າ. ກຣິສຕັງໃນເມືອງເມໂຊໂປຕາເມຍໄດ້ຂຽນໄວ້ວ່າ: “ດວງໃຈທີ່ເຕັມປ່ຽມດ້ວຍຄວາມເຫັນອົກເຫັນໃຈບໍ່ສາມາດຢືນຢູ່ໄດ້ ຖ້າເຫັນຄວາມຊົ່ວຮ້າຍທີ່ເກີດຂຶ້ນທ່າມກາງສິ່ງທີ່ພຣະເຈົ້າສ້າງຂຶ້ນ” (ອີຊາຢາ ຊີລຽນ, ສັດຕະວັດທີ 7).

ຜູ້ປະສົບໄພຫຼັກໆຂອງໄພພິບັດທາງລະບົບນິເວດ ສ່ວນຫຼາຍແມ່ນຄົນທຸກຈົນ. ຜົນກະທົບຈາກສະພາບພູມອາກາດປ່ຽນແປງເປັນສາເຫດໃຫ້ຜູ້ຄົນຍ້າຍຖິ່ນຖານຈາກບ່ອນທີ່ຕົນເອງເຄີຍຢູ່.

ແຜ່ນດິນນີ້ເປັນຂອງພຣະເຈົ້າ; ມະນຸດໄດ້ພັກພາອາໄສປຽບດັ່ງເປັນຂອງລາງວັນ. ພວກເຮົາໄດ້ຮັບຄວາມໄວ້ວາງໃຈຈາກພຣະເຈົ້າໃຫ້ເປັນຜູ້ຮັບຜິດຊອບຕໍ່ແຜ່ນດິນນີ້: ຮັກສາບົວລະບັດໂລກນີ້, ບໍ່ຄວນທໍາລາຍຊັບພະຍາກອນຕ່າງໆ. ແຜ່ນດິນນີ້ມີຂີດຈໍາກັດ, ມະນຸດເຮົາກໍເຊັ່ນດຽວກັນຈໍາເປັນຕ້ອງຮັບຮູ້ຂີດຈໍາກັດຂອງຕົນເອງ.

ໂລກນີ້ແມ່ນບ້ານຂອງພວກເຮົາໝົດທຸກຄົນ ແລະໃນປະຈຸບັນນີ້ ໂລກເຮົາກໍາລັງຕົກຢູ່ໃນພາວະທົນທຸກ. ບໍ່ມີບ່ອນສໍາລັບຄວາມບໍ່ໃສ່ໃຈໃນການປະເຊີນກັບໄພພິບັດທາງສິ່ງແວດລ້ອມ, ການສູນພັນຂອງບັນດາພືດພັນຕ່າງໆ, ຜົນຮ້າຍຂອງລະບົບຊີວະວິທະຍາ ຫຼື ການຕັດໄມ້ທໍາລາຍປ່າໃນບາງພື້ນທີ່ໃນໂລກນີ້.

- ພວກເຮົາຈະສະແດງຄວາມເປັນໜຶ່ງດຽວຕໍ່ສິ່ງທີ່ພຣະເຈົ້າຊົງສ້າງໄດ້ແນວໃດ? ໂດຍການຕັດສິນໃຈຈາກການລົງມືກະທໍາໃນຊີວິດປະຈໍາວັນຂອງເຮົາ, ໂດຍການພິຈາລະນາໄຕ່ຕອງໃຫ້ຖີ່ຖ້ວນໃນທຸກໆການກະທໍາ ໃນນາມທີ່ເປັນຜູ້ບໍລິໂພກແລະເປັນປະຊາຊົນໃນຊາດນັ້ນໆ, ໂດຍການເລືອກຫົນທາງການດໍາລົງຊີວິດແບບທໍາມະດາສາມັນ. ທໍາຄວາມເຂົ້າໃຈວ່າວົງຈອນຊີວິດເປັນທີ່ມາຂອງຄວາມຊື່ນຊົມຍິນດີ. ຍັງມີຜູ້ຄົນຈໍານວນໜຶ່ງທີ່ມີຄວາມປະສົງທີ່ຈະຖືສິນອົດໃນຄວາມຢາກໄດ້ຢາກມີເພື່ອສິ່ງແວດລ້ອມ ແລະ ເພື່ອຄວາມຍຸດຕິທໍາໃນມື້ທໍາອິດຂອງທຸກໆເດືອນ. ນີ້ເປັນການເລີ່ມຈາກຈຸດເລັກໆນ້ອຍໆເພື່ອສະແດງໃຫ້ເຖິງຄວາມເມດຕາກາລຸນາຂອງພຣະເຈົ້າຕໍ່ສິ່ງຕ່າງໆ ທີ່ເປັນສ່ວນໜຶ່ງຂອງບ້ານຫຼັງນີ້ (ໂລກນີ້), ມັນບໍ່ແມ່ນທາງເລືອກໃດໜຶ່ງວ່າຄວນເຮັດຫຼືບໍ່ຄວນ; ມັນແມ່ນເງື່ອນໄຂທີ່ຈໍາເປັນໃນການດໍາລົງຊີວິດເພື່ອຄວາມສຸກ.